# ການຈົດທະບຽນໃນວັນເລືອກຕັ້ງ

VOTE 2016

ເພື່ອຈົດທະບຽນຢູ່ບ່ອນເລືອກຕັ້ງໃນວັນເລືອກຕັ້ງ ທ່ານຕ້ອງເອົາບັດຢັ້ງຢືນທີ່ຢູ່ອັນໜຶ່ງຕາມທີ່ໄດ້ລະບຸໄວ້ຢູ່ຂ້າງລຸ່ມນີ້ມານຳ.

## ① ບັດປະຈຳຕົວທີ່ມີຊື່ ແລະທີ່ຢູ່ປັດຈຸບັນ

- ໃບຂັບຂີ່ຂອງລັດມິນນີໂຊຕ້າ ທີ່ເປັນທາງການ, ໃບຂັບຂີ່ຊົ່ວຄາວ ຫຼື ບັດປະຈຳຕົວ; ຫຼື ໃບຊຳລະເງິນຂອງບັດອັນໃດອັນໜຶ່ງຂອງພວກນີ້.
- ບັດປະຈຳຕົວຊົນເຜົ່າ ທີ່ມີຊື່ ທີ່ຢູ່ ຮູບ ແລະລາຍເຊັນຂອງທ່ານໃນບັດນັ້ນ.

## ② ບັດປະຈຳຕົວທີ່ມີຮູບຕິດ ຮວມທັງເອກະສານທີ່ມີທີ່ຊື່ແລະທີ່ຢູ່ຂອງທ່ານໃນປັດຈຸບັນຢູ່ໃນນັ້ນ

### ບັດປະຈຳຕົວມີຮູບຕາມກົດໝາຍອະນຸມັດ

*ໃຫ້ເລືອກໃຊ້ອັນໜຶ່ງ. ໝົດອາຍຸແລ້ວກໍໄດ້.*

ໃບຂັບຂີ່, ບັດປະຈຳຕົວປະຈຳລັດ ຫຼື ໃບຂັບຂີ່ຊົ່ວຄາວ ທີ່ອອກໃຫ້ໂດຍລັດໃດລັດໜຶ່ງ

ພາສປອດສະຫະລັດ

ບັດປະຈຳຕົວທະຫານສະຫະລັດ ຫຼື ບັດປະຈຳຕົວນັກລົບເກົ່າ

ບັດປະຈຳຕົວຊົນເຜົ່າ ທີ່ມີຊື່ ລາຍເຊັນແລະມີຮູບຕິດ

ບັດປະຈຳຕົວຂອງມະຫາວິທະຍາໄລແຫ່ງລັດມິນນີໂຊຕາ, ຂອງວິທະຍາໄລ ຫຼື ວິທະຍາໄລເຕັກນິກ

ບັດປະຈຳຕົວຂອງມັດທະຍົມປາຍຂອງລັດມິນນີໂຊຕາ

### ເອກະສານທີ່ອະນຸມັດ

*ໃຫ້ເລືອກໃຊ້ອັນໜຶ່ງ. ສາມາດສະແດງໃຫ້ເຫັນທາງອຸປະກອນອີເລັກໂທຣນິກກໍໄດ້.*

ໃບບິວ, ໃບແຈ້ງບັນຊີ ຫຼື ໃບແຈ້ງໃຫ້ຈ່າຍເງິນໃນການເລີ້ມບໍລິການ ຫຼື ມີວັນທີພາຍໃນ 30 ວັນຂອງການເລືອກຕັ້ງ:

* ຄ່າໂທລະສັບ, ຄ່າທີວີ ຫຼື ອິນເທີເນັດ
* ຄ່າຂີ້ເຫຍື້ອ, ຄ່ານ້ຳເສຍ, ຄ່າໄຟຟ້າ, ຄ່າແກ໊ສ ຫຼື ຄ່ານ້ຳ
* ໃບທະນາຄານ ຫຼື ບັດເຄຣດິດ
* ຄ່າເຊົ່າ ຫຼື ຄ່າຈຳນອງ

ສັນຍາເຊົ່າ ຫຼື ຂໍ້ຕົກລົງການເຊົ່າທີ່ເປັນທາງການຈົນເຖິງວັນເລືອກຕັ້ງ

ໃບຊຳລະຄ່າເສຍເທີມໂຮງຮຽນ

ມີຕໍ່ທາງຫຼັງ...

# ການລົງທະບຽນໃນວັນເລືອກຕັ້ງ

VOTE 2016

...ຕໍ່ຈາກທາງໜ້າ

## ③ ຜູ້ທີ່ລົງທະບຽນອອກສຽງແລ້ວ ທີ່ສາມາດຢັ້ງຢືນທີ່ຢູ່ຂອງທ່ານ

ຜູ້ທີ່ລົງທະບຽນອອກສຽງຈາກເຂດເລືອກຕັ້ງຂອງທ່ານ ສາມາດໄປບ່ອນເລືອກຕັ້ງກັບທ່ານ ເພື່ອໄປເຊັນສາບານຕົນໃນການຢັ້ງຢືນທີ່ຢູ່ຂອງທ່ານ. ສິ່ງນີ້ເອີ້ນວ່າ 'ຮັບຮອງ.' ຜູ້ທີ່ລົງທະບຽນອອກສຽງສາມາດເຊັນຮັບຮອງຄົນອອກສຽງໄດ້ຮອດແປດຄົນ. ທ່ານບໍ່ສາມາດເຊັນຮັບຮອງໃຫ້ຄົນອື່ນໄດ້ ຖ້າຄົນອື່ນເຊັນຮັບຮອງໃຫ້ທ່ານແລ້ວ.

## ④ ບັດປະຈຳຕົວນັກຮຽນວິທະຍາໄລ ທີ່ມີລາຍຊື່ໃນຫໍພັກຕິດນຳ

ວິທະຍາໄລແລະມະຫາວິທະຍາໄລແຫ່ງຕ່າງໆ ສົ່ງລາຍຊື່ຂອງນັກຮຽນທີ່ຢູ່ໃນຫໍພັກໃຫ້ເຈົ້າໜ້າທີ່ເລືອກຕັ້ງ. ຖ້າທ່ານມີຊື່ໃນລາຍຊື່ນັ້ນ ໃຫ້ທ່ານເອົາບັດປະຈຳຕົວໃຫ້ເຈົ້າໜ້າທີ່ເບິ່ງເພື່ອລົງທະບຽນໃຫ້ສຳເລັດ.

## ⑤ ການລົງທະບຽນເປັນທາງການໃນເຂດເລືອກຕັ້ງ

ຖ້າທ່ານລົງທະບຽນໃນເຂດເລືອກຕັ້ງແລ້ວ ແຕ່ທ່ານປ່ຽນຊື່ຫຼືຍ້າຍພາຍໃນເຂດເລືອກຕັ້ງດຽວກັນ, ທ່ານພຽງແຕ່ບອກຊື່ແລະທີ່ຢູ່ກ່ອນຂອງທ່ານໃຫ້ເຈົ້າໜ້າທີ່ເລືອກຕັ້ງຮູ້ເທົ່ານັ້ນ.

## ⑥ ການແຈ້ງການລົງທະບຽນຊ້ຳ

ຖ້າທ່ານລົງທະບຽນອອກສຽງພາຍໃນ 20 ວັນຂອງວັນເລືອກຕັ້ງ, ທ່ານອາດຈະໄດ້ຮັບໜັງສືທາງໄປສະນີແຈ້ງເຖິງການລົງທະບຽນຊ້ຳ. ເອົາໜັງສືນັ້ນໄປນຳ ແລ້ວໃຊ້ໜັງສືນັ້ນເປັນຫຼັກຖານການຢັ້ງຢືນທີ່ຢູ່ອາໄສໃນການລົງທະບຽນ.

## ⑦ ພະນັກງານຂອງ ສະຖານທີ່ພັກອາໄສ

ຖ້າທ່ານຢູ່ໃນສະຖານທີ່ພັກອາໄສ ພະນັກງານສາມາດໄປບ່ອນເລືອກຕັ້ງກັບທ່ານ ເພື່ອຢັ້ງຢືນທີ່ຢູ່ຂອງທ່ານ. ສິ່ງນີ້ເອີ້ນວ່າ 'ຮັບຮອງ.' ພະນັກງານສາມາດຮັບຮອງໃຫ້ຜູ້ທີ່ມີສິດອອກສຽງໝົດທຸກຄົນໃນສະຖານທີ່ນັ້ນໄດ້.

***Minneapolis Elections & Voter Services***
***vote.minneapolismn.gov • 311***

Minneapolis
Elections and Voter Services